ຈົດໝາຍຂ່າວ

ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ

ສະບັບທີ 116 ມັງກອນ 2011

ອພ 137 / ພຈ 100311 ຈພ 500

ຊົນເຊີຍ ວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ (20 ມັງກອນ) ຢ່າງສຸດໃຈ

ສາລະບານ

ກອງປະຊຸມຕິດຕາມ...
ໜ້າ 1 - 2

ການວາງແຜນ...
ໜ້າ 2 - 3

ສິ່ງຄວນຮູ້ຕ່າງໆ...
ໜ້າ 3 - 8

ຄະນະຮັບຜິດຊອບ
ດຣ. ບຸນຖອງ ບົວຫອມ
ໄວຍະພັດ ທັດຕະມະນີວົງ

ບັນນາທິການ
ສົມພະຈັນ ວົງພະສຸວັນ
ບັນດິດ ຣາມາງກູນ

ອອກແບບ
ຂັນຄຳ ອ້ວນອຸດົມ
ພູທອນ ສົມມະວັນ

ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ,
ຕູ້ ປ. ນ. 7170 ວຽງຈັນ
ໂທ: (856 21) 770892
(856 21) 770089
ແຟກ (856 21) 770892
Email:khanhkam@nafri.org.la
020 55426630
www. nafri.org.la

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

ສະໜັບສະໜູນ ໂດຍ: ໂຄງການຄົ້ນຄວ້າ ລະບົບຜະລິດກະສິກຳເຂດພູດອຍ ໂດຍ ອີງໃສ່ເຂົ້າເປັນພື້ນຖານ

ກອງປະຊຸມຕິດຕາມ ແລະ ປະເມີນຜົນ ກົນໄກການແລກປ່ຽນ ຂໍ້ມູນຂ່າວສານ

ໂດຍ: ພູທອນ ສົມມະວັນ, ສູນຂໍ້ມູນຂ່າວສານ

ວຽກງານທາງດ້ານການປັບປຸງແນວພັນ ເປັນວຽກງານນຶ່ງໃນການຄ້ຳປະກັນສະບຽງອາຫານເຊິ່ງເປັນ 4 ເປົ້າໝາຍຂອງຂະແໜງງານກະສິກຳ - ປ່າໄມ້ ແລະ ແຜນງານການພັດທະນາລະບົບກົນໄກການແລກປ່ຽນຂໍ້ມູນຂ່າວສານທາງພັນທຸກຳພືດ ໄດ້ຖືກກຳນົດຂຶ້ນໂດຍການເຫັນດີລະຫວ່າງ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ຮ່ວມກັບ ອົງການອາຫານ ແລະ ການກະເສດ ສະຫະປະຊາຊາດ. ເຊິ່ງໃນນັ້ນແມ່ນແນໃສ່ເກັບກຳຂໍ້ມູນທາງດ້ານການອະນຸລັກ ແລະ ນຳໃຊ້ພັນທຸກຳພືດຢູ່ໃນລາວ ເຂົ້າໃນລະບົບຖານຂໍ້ມູນພັນທຸກຳພືດສາກົນ ເພື່ອໃຫ້ສາມາດນຳໃຊ້ ແລະ ແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນໄດ້. ລະບົບດັ່ງກ່າວ ຈະເປັນບ່ອນສັງລວມບັນດາຊະນິດພັນພືດຂອງລາວໄວ້ໃນລະບົບ ແລະ ໃນປະຈຸບັນນີ້ ມີຂໍ້ມູນຫຼາຍກວ່າ 2,000 ລາຍການ (ເວັບໄຊ້ຂໍ້ມູນ www.pgrfa.org/gpa).

ໃນວັນທີ 28 ມັງກອນ 2011 ໄດ້ຈັດກອງປະຊຸມ ຕິດຕາມ ແລະ ປະເມີນຜົນ ຂອງວຽກງານຂຶ້ນຢູ່ທີ່ຫ້ອງປະຊຸມ ຂອງສູນຂໍ້ມູນຂ່າວສານ, ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ພາຍໃຕ້ການເປັນປະທານ ຂອງ ທ່ານ ດຣ. ບຸນຖອງ ບົວຫອມ, ຫົວໜ້າສະຖາບັນ ແລະ ມີແຂກທີ່ຖືກເຊີນຈາກພາກສ່ວນຕ່າງ ອ້ອມຂ້າງ ສຄກປ ເຂົ້າຮ່ວມທັງໝົດ 16 ທ່ານ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອຕິດຕາມປະເມີນຜົນ ແລະ ສະເໜີແຜນການເຄື່ອນໄຫວທີ່ຜ່ານມາ ແລະ ຄາດຄະເນແຜນປະຕິບັດວຽກງານໃນຕໍ່ໜ້າຂອງໂຄງການ. ໃນກອງປະຊຸມ

ຜູ້ເຂົ້າຮ່ວມ ຍັງໄດ້ປຶກສາຫາລື ແລກປ່ຽນຄຳຄິດຄຳເຫັນຕໍ່ແຜນປະຕິບັດງານໃນໄລຍະຜ່ານມາ ໂດຍສະເພາະ ໃນການຈັດຕັ້ງປະຕິບັດວຽກງານ ໃນໄລຍະສຸດທ້າຍຂອງໂຄງການ. ຈາກນັ້ນ ທ່ານປະທານກອງປະຊຸມ ໄດ້ມອບຄອມພິວເຕີ ຈຳນວນ 3 ເຄື່ອງ ໃຫ້ແກ່ສູນທີ່ມີສ່ວນຮ່ວມ ເພື່ອເອົາໄປຈັດຕັ້ງປະຕິບັດໃນການເກັບກຳຂໍ້ມູນ. ສູນດັ່ງກ່າວ ໄດ້ແກ່ ສູນຄົ້ນຄວ້າການປະມົງ, ສູນຄົ້ນຄວ້າປ່າໄມ້ ແລະ ສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ.

ການວາງແຜນນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້

ຮຽບຮຽງໂດຍ: ຂັນຄຳ ອ້ວນອຸດົມ, ສູນຂໍ້ມູນຂ່າວສານ

ການວາງແຜນນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້ ແມ່ນວຽກງານນຶ່ງທີ່ສຳຄັນ ແລະ ເປັນບູລິມະສິດອັນດັບນຶ່ງ ຂອງ ສຄກປ, ທັງເປັນບັນຫາເຄັ່ງຮ້ອນ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້.



ການວາງແຜນນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້ ແບບມີສ່ວນຮ່ວມ ໃນກຸ່ມບ້ານຊຽງດາວ, ເມືອງເມິງ, ແຂວງບໍ່ແກ້ວ ແມ່ນກິດຈະກຳນຶ່ງ ເພື່ອຮັບປະກັນໃນການຄຸ້ມຄອງ, ນຳໃຊ້ທີ່ດິນກະສິກຳ, ດິນປ່າໄມ້ ໃຫ້ມີຄວາມຍືນຍົງ ຕິດພັນກັບການຢຸດຕິການຖາງປ່າເຮັດໄຮ່ ແລະ ຈັດສັນອາຊີບຄົງທີ່, ພ້ອມທັງເປັນການທົດສອບຮູບແບບ ຂອງການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ໃນລະດັບກຸ່ມບ້ານ ຂອງໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມສາມາດ. ເນື່ອງຈາກວ່າ ໃນກຸ່ມບ້ານຊຽງດາວ ຍັງບໍ່ທັນໄດ້ກຳນົດເຂດຜະລິດສະເພາະ ທີ່ເປັນທ່າແຮງໃນການກຳນົດເຂດພັດທະນາເສດຖະກິດສັງຄົມ ຂອງກຸ່ມບ້ານ ແລະ ຂາດການວາງແຜນທີ່ສອດຄ່ອງກົມກຽວກັບທ່າແຮງຕົວຈິງ ທາງດ້ານກາຍະພາບ, ເສດຖະກິດ-ສັງຄົມ, ລະບົບການຜະລິດກະສິກຳ ແລະ ປ່າໄມ້ ທີ່ຕິດພັນກັບວິທີການດຳລົງຊີວິດ ຂອງຊາວກະສິກອນບັນດາເຜົ່າ ໃນເຂດດັ່ງກ່າວ.

ຈຸດປະສົງ

ເພື່ອກຳນົດເຂດດິນກະສິກຳ ແລະ ປ່າໄມ້ ໃຫ້ແທດເໝາະກັບເງື່ອນໄຂ, ທ່າແຮງຂອງແຕ່ລະກຸ່ມບ້ານ. ເພື່ອຊຸກຍູ້ການຜະລິດ ແລະ ການລົງທຶນ ໃຫ້ມີປະສິດທິພາບສູງ ທາງດ້ານເສດຖະກິດ-ສັງຄົມ ແລະ ຮັກສາສິ່ງແວດລ້ອມ.

ວິທີການ

- ກຳນົດຂອບເຂດພື້ນທີ່.
- ກະກຽມ, ສັງລວມ ແລະ ກວດກາຂໍ້ມູນ.
- ແປພາບຖ່າຍດາວທຽມ ແລະ ອາກາດ.
- ລົງພາກສະໜາມກວດກາຂໍ້ມູນທາງພູມສາດ ແລະ ເສດຖະກິດສັງຄົມ.
- ວິເຄາະຂໍ້ມູນ.
- ສ້າງແຜນ, ຂຽນບົດລາຍງານ ແລະ ນຳສະເໜີຜົນໄດ້ຮັບ.

ຜົນໄດ້ຮັບ

ເນື້ອທີ່ການແບ່ງເຂດດິນກະສິກຳ ແລະ ປ່າໄມ້ ກຸ່ມບ້ານຊຽງດາວ:

ລາຍການ	ຊຽງດາວ	ປຸງຈອມແສງ	ມອນແຫຼມ	ຫ້ວຍອໍ	ເນື້ອທີ່ລວມ/ຮຕ	ເນື້ອທີ່ລວມ %
ພື້ນທີ່ປ່າໄມ້	1,480	457	591	1,108	3,836	54.83
ພື້ນທີ່ດິນກະສິກຳ	406	465	736	1,302	2,909	41.58
ບ້ານ, ສາຍນ້ຳ	313	79	6	35	251	3.59
ລວມ	2,017	1,002	1,533	2,445	6,996	100.00

ຂໍ້ສະເໜີແນະ

- ຄະນະກຳມະການຂັ້ນເມືອງ ຕ້ອງໄດ້ກຳນົດພາລະບົດບາດ ແລະ ໜ້າທີ່ຂອງຕົນ ເພື່ອສ້າງເງື່ອນໄຂໃນການເຄື່ອນໄຫວຈັດຕັ້ງປະຕິບັດ ການຈັດສັນ ແລະ ຄຸ້ມຄອງທີ່ດິນກະສິກຳ, ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້.
- ຄົ້ນຄວ້າພິຈາລະນາອະນຸມັດການໃຫ້ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ ແລະ ປ່າໄມ້ ບົນພື້ນຖານກົດໝາຍ, ດຳລັດ, ລະບຽບການ ຕາມເປົ້າໝາຍ ແລະ ມາດຖານທາງດ້ານນະ�โยบาย ແລະ ເຕັນນິກການນຳໃຊ້ດິນກະສິກຳ ແລະ ປ່າໄມ້ ທີ່ກຳນົດໄວ້.
- ບັນດາຂະແໜງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງໃຫ້ຄວາມຮ່ວມມື, ສະໜັບສະໜູນ ແລະ ປະສານງານກັນ ເພື່ອນຳໃຊ້ຜົນຂອງການແບ່ງເຂດດິນກະສິກຳ ແລະ ປ່າໄມ້ ກຸ່ມບ້ານຊຽງດາວ.
- ດຳເນີນການຊຸກຍູ້ ຕິດຕາມ, ກວດກາ ແລະ ປະເມີນຜົນຢ່າງເປັນລະບົບ ເພື່ອສາມາດຖອດຖອນບົດຮຽນ ແລະ ປັບປຸງແກ້ໄຂວຽກງານຢ່າງທັນການ ແລະ ເດັດຂາດຕໍ່ຜູ້ລະເມີດ.

ເຕັກນິກການຂະຫຍາຍພັນໝາກນົ້ມັນ

ໂດຍ: ວຽງໄຊ ຢ່າຈູຕົວ, ສູນຂໍ້ມູນຂ່າວສານ

1. ຄຸນຄ່າຂອງການປູກໝາກນົ້ມັນ

ປູກເປັນປ່າທົດແທນປ່າທີ່ຖືກທຳລາຍ ສາມາດແກ້ໄຂສະພາບໂລກຮ້ອນ ຊ່ວຍປັບປຸງສະພາບການສົມດຸນ ສະພາບແວດລ້ອມໃຫ້ຄົງເດີມ ເພື່ອການທ້ອງທ່ຽວທຳມະຊາດ, ຮັກສາແຫຼ່ງສະໜອງໂຮງງານຜະລິດໄຟຟ້າ.

- ເປັນພືດເສດຖະກິດຕົວໃໝ່ ທີ່ໃຫ້ນ້ຳມັນພືດໃນລະດັບສູງ ເພື່ອຜະລິດເປັນນ້ຳມັນໃສ່ເຄື່ອງຈັກຊະນິດຕ່າງໆ ແບບປອດສານພິດ.
- ເປັນໄມ້ຍືນຕົ້ນໃຫ້ຜົນຜະລິດປີລະຄັ້ງ ເລີ່ມໃຫ້ຜົນຜະລິດ ແຕ່ອາຍຸ 3 ເຖິງ 70 ປີ.



- ປູກໝາກນ້ຳມັນ 1 ເຮັກຕາ ດ້ວຍຂະໜາດ 4x6 ແມັດ ຈະມີຕົ້ນໝາກນ້ຳມັນ 416 ຕົ້ນ. ໃນນຶ່ງປີ ຈະໃຫ້ໝາກ 10-15 ໂຕນ, ສາມາດສ້າງລາຍຮັບໄດ້ 13-15 ລ້ານກີບ/ປີ.

2. ວິທີການເກັບຮັກສາແກ່ນໝາກນ້ຳມັນ

- ໝາກນ້ຳມັນຈະເລີ່ມເກີດດອກໃນຕົ້ນລະດູຝົນ ແລະ ໝາກຈະແກ່ຕົ້ນລະດູໜາວ ເດືອນ 10-12.
- ສັງເກດເບິ່ງໝາກນ້ຳມັນໜ່ວຍທີ່ແກ່ຈະມີສີດຳ, ເກັບມາຕາກແດດໃຫ້ແຫ້ງ ແລ້ວແກະເອົາແກ່ນທາງໃນມາເກັບຮັກສາໄວ້ບ່ອນທີ່ຮົ່ມ ອາກາດລ່ວງດີ.
- ຄັດເລືອກເອົາແກ່ນທີ່ຕື່ງ ແລະ ສົມບູນດີ ໄວ້ເຮັດແນວພັນ. ເນື້ອທີ່ 1 ເຮັກຕາ ຈະໃຊ້ແນວພັນ 1-2 ກິໂລກຼາມ.

ການກະກຽມອຸປະກອນມີ

ຖົງຢາງຈຳນວນ 500 ຖົງ, ຂະໜາດຖົງ 5x10 ຊຕມ.

1. ດິນຊາຍແກມຕົມ ຫຼື ຝຸ່ນຄອກປະສົມ.
2. ແປງໜານຕັ້ງຖົງເກັບຮັກສາຢູ່ບ່ອນຮົ່ມ ຫຼື ຕານ່າງກັນແສງ. ນຳໃຊ້ຂີ້ເລື່ອຍ ຫຼື ຂີ້ແກບໝັກແກ່ນ.

3. ວິທີການກ້າແກ່ນ

- ໝາກນ້ຳມັນມີເປືອກແຂງ ນ້ຳຊຶມເຂົ້າຫຍາກ ຕ້ອງຕັດຫົວແຫຼມໃຫ້ເປັນຮູ ໃຫ້ນ້ຳສາມາດຊຶມເຂົ້າໄດ້.
- ແຊ່ນ້ຳໄວ້ 1 ຄືນ ແລ້ວນຳໄປຄົນໃສ່ຂີ້ເລື່ອຍ ຫຼື ຂີ້ແກບ ໝັກໄວ້ບ່ອນທີ່ຮົ່ມເຢັນ ຫົດນ້ຳທຸກເຊົ້າ-ແລງ ແລ້ວເອົາແພຢາງປົກຄຸມ ຈົນແກ່ນແຕກເຫັນສີຂາວຕາມແກ່ນ.

ການກະກຽມຮ່ານເບີ້າຖົງຢາງ

- ກຽມໜານ ເພື່ອວາງຖົງເບີ້າ ຂະໜາດ 1 ແມັດ, ກວ້າງ, ຍາວ ຕາມຄວາມເໝາະສົມ, ໃຊ້ໄມ້ກ້ານເປັນຂອບ ແລ້ວເອົາແພຢາງປູພື້ນ.
- ນຳຖົງຢາງເບີ້າ ໄປລຽງເປັນແຖວ ຫົດນ້ຳກ່ອນຈະນຳແກ່ນໄປປັກໃສ່ 2 ມື້.
- ເມື່ອເຫັນແກ່ນແຕກຂາວແລ້ວ ເອົາແກ່ນລົງເບີ້າ 1 ເມັດຕໍ່ເບີ້າ. ເອົາສິ່ງກັນແດດມາປົກຄຸມ.
- ຫົດນ້ຳເຊົ້າ-ແລງ ຈົນເຖິງ 4-5 ມື້, ເບ້ຍໝາກນ້ຳມັນຈະແຕກພົ້ນດິນຂຶ້ນ.
- ກໍລະນີເບ້ຍໝາກນ້ຳມັນແຕກພົ້ນຂຶ້ນດິນແຕ່ກີບລ້ຽງບໍ່ສາມາດຫຼົ່ນເອງໄດ້ ຕ້ອງໃຊ້ວິທີແກະເອົາກີບລ້ຽງທີ່ຕິດຢູ່ອອກ.
- ຂໍ້ລະວັງ ບໍ່ຄວນເຮັດໃຫ້ໃບ ແລະ ລຳຕົ້ນອ່ອນຫັກ.
- ຕ້ອງຫົດນ້ຳສະໝ່ຳສະເໝີ ເຊົ້າ-ແລງ ຈົນກວ່າອາຍຸຂອງເບ້ຍໄມ້ໄດ້ 40-45 ມື້ ມີໃບ 4-6 ໃບ ສາມາດນຳໄປປູກໄດ້.

4. ວິທີການປູກຕົ້ນໝາກນ້ຳມັນ

- ພື້ນທີ່ປູກຕ້ອງໃກ້ເສັ້ນທາງຄົມມະນາຄົມ ສະດວກໃນການເຂົ້າເຖິງ.
- ໄລຍະເວລາປູກ ແມ່ນເລີ່ມແຕ່ ເດືອນ 4 - 6.

ປູກຕາມທຳມະຊາດ

- ຂຸດຂຸມ 30x30x30 ຊັງຕີແມັດ, ໄລຍະຫ່າງ 6x5 ແມັດ ປະໄວ້ໃຫ້ຝົນຕົກຮຳ 2-3 ເທື່ອ ສັງເກດເຫັນດິນໄຫຼລົງຂຸມ.

- ເອົາແກ່ນຕາກ 1 ມື້ ແຊ່ 1 ຄືນ ໄປປູກຂຸມ 1 ເມັດ.

ປູກແບບວິທະຍາສາດ

- ຂຸດຂຸມ 50x50x50 ຊັງຕີແມັດ, ໄລຍະຫ່າງ 4x4 ແມັດ ບ່ອນທີ່ສາມາດ ໃຊ້ທໍ່ສົ່ງນ້ຳແຕ່ລະຕົ້ນໄດ້ ແລະ ສາມາດນຳໃຊ້ເຕັກນິກໃຫ້ເກີດໝາກນອກ ລະດູໄດ້.

5. ການບົວລະບັດຮັກສາ

- ເມື່ອເບ້ຍທີ່ນຳໄປປູກຕິດຮາກເລີ່ມມີການຂະ ຫຍາຍຕົວແຂງແຮງ ຄວາມສູງໄດ້ 30-50 ຊັງຕີ ແມັດ ໃຫ້ເດັດຍອດຖິ້ມ.
- ເມື່ອແຕກຍອດໃໝ່ອອກມາໃຫ້ເລືອກເອົາຍອດທີ່ ແຂງແຮງໄວ້ 3 ຍອດ ເຫຼືອນັ້ນໃຫ້ລີຖິ້ມ.
- ເມື່ອ 3 ຍອດຂະຫຍາຍຕົວຍາວຂຶ້ນໄດ້ 30 ຊັງຕີ ແມັດ ແລ້ວ ໃຫ້ເດັດຖິ້ມ.
- ເມື່ອ 3 ງ່າ ແຕກຍອດອອກ ໃຫ້ຄັດເລືອກເອົາງ່າ ທີ່ສົມບູນປະໄວ້ ເຫຼືອນັ້ນໃຫ້ລີຖິ້ມໝົດ, ທັງໝົດຊົງ ຟຸ່ມ 1-3-9-12.
- ເພື່ອໃຫ້ງ່າທີ່ຈິ່ງໄວ້ ມີແນວເນີ້ງຕາມເປົ້າໝາຍ ຕ້ອງໃຊ້ໄມ້ບັງຄັບແຕ່ລະງ່າ ໃຫ້ເນີ້ງຕາມທິດທີ່ປະ ສົງບໍ່ໃຫ້ງ່າຕີບກັນ.

6. ເພື່ອປະຕິບັດຕາມທິດຊີ້ນຳ ຖືເອົາພືດໄລຍະສັ້ນ, ໄລຍະກາງ ຫຼໍ່ລັງພືດໄລຍະຍາວ ຈົ່ງກຳນົດພືດສະ ລັບການປູກໝາກນ້ຳມັນ ດັ່ງນີ້:

1. **ພືດໄລຍະກາງ**: ໃຫ້ປູກພືດຕົ້ນຖົ່ວແຮສັບຫວ່າງ ການປູກໝາກນ້ຳມັນ ເມື່ອຮອດເດືອນ 12 ຈະສາ

ມາດນຳເອົາຄັ່ງມາປ່ອຍໃສ່ຕົ້ນຖົ່ວແຮໄດ້ເຄິ່ງນຶ່ງ ສ່ວນອີກເຄິ່ງນຶ່ງຈົ່ງໄວ້ປ່ອຍ ໃນລະດູທີ 2 ຄືເດືອນ 6 ແລ້ວໝູນວຽນໄປເຖິງ 3 ປີ ຕົ້ນຖົ່ວແຮຈະຕາຍ ເລີ່ມປູກຫຍ້າລ້ຽງສັດ.

2. **ພືດໄລຍະສັ້ນ**: ໃຫ້ປູກເຂົ້າສາລີ ຫຼື ໝາກເດືອຍ, ໝາກງາ ສະລັບຕາມຄວາມເໝາະສົມ.

ຕົ້ນໜໍ່ໄມ້ຂົມເປັນຂີ

ຮູບ: ຂີຂອງໜໍ່ຂົມ

ໂດຍ: ສຸນທອນ ເກດພັນ, ສູນຄົ້ນຄວ້າປ່າໄມ້

ຕົ້ນໜໍ່ໄມ້ຂົມ ແມ່ນນຶ່ງໃນ 52 ຊະນິດພັນໄມ້ປ່ອງ ແລະ ເປັນໄມ້ປ່ອງຊະນິດດຽວທີ່ເກີດດ່ຽວ ໃນ ສປປ ລາວ. ໃນໂລກນີ້ໄດ້ບັນທຶກມີໄມ້ປ່ອງເຖິງ 1,500 ຊະນິດ ທີ່ນອນຢູ່ ໃນ 87 ສະກຸນ. ໄມ້ປ່ອງແຕ່ລະຊະນິດ ຈະມີອາຍຸການອອກ ດອກ ຫຼື ເປັນຂີຕ່າງກັນ ຊຶ່ງຕາມທຳມະຊາດແລ້ວ ການເປັນ ຂີແມ່ນການໝົດອາຍຸ ຫຼື ໝົດລຸ້ນ, ການເປັນຂີ ກໍຄືການ ອອກດອກເປັນໝາກຢ່າງຫຼວງຫຼາຍ, ຕົ້ນແມ່ຈະຕາຍໄປເປັນ ຂະບວນ ແລ້ວແກ່ນຈະຫຼົ່ນລົງ, ເມື່ອລະດູຝົນມາເຖິງ ແກ່ນກໍ່ ຈະແຕກອອກ ແຜ່ພັນໃໝ່ຢ່າງຫຼວງຫຼາຍ ເຕີບໃຫຍ່ຂະຫຍາຍ ຕົວ ແທນລຸ້ນແມ່.

ຜ່ານການຕິດຕາມ ແລະ ບັນທຶກ ການເປັນຂີຂອງ ໄມ້ປ່ອງ ໃນ ສປປ ລາວ ໂດຍສູນຄົ້ນຄວ້າປ່າໄມ້ ເຫັນວ່າ ນັບແຕ່ປີ 1990 ມາເຖິງປະຈຸບັນ ໃນຈຳນວນໄມ້ປ່ອງ 52 ຊະ ນິດ ເຫັນມີ 27 ຊະນິດ ທີ່ໄດ້ເປັນຂີຜ່ານມາ, ຊະນິດທີ່ເປັນຂີ ໃນປີ 2011 ນີ້ ແມ່ນໄມ້ໜໍ່ຂົມ ທີ່ເປັນຊະນິດທີ 28. ການ

ພົບເຫັນຕົ້ນໝໍ່ໄມ້ຂົມທີ່ເປັນຂີນີ້ ມີຂຶ້ນໃນລະຫว่ານເດືອນ ມັງກອນ 2011 ນີ້ເອງ ທີ່ປ່າສະຫງວນ ຂອງບ້ານໜອງຊົງ, ເມືອງຄຳເກີດ, ແຂວງບໍລິຄຳໄຊ. ຈຸດພິກັດທີ່ເກີດຂີ ວັດແທກດ້ວຍ GPS ເສັ້ນແວງ (X) 0476510, ເສັ້ນຂະໜານ (Y) 2006416, ລະດັບສູງຈາກໜ້ານ້ຳທະເລ 450-460 ແມັດ. ຫຼັງຈາກເຫັນການເປັນຂີຂອງຕົ້ນໝໍ່ໄມ້ຂົມ ທີ່ ບ້ານໜອງຊົງ ແລ້ວ, ສູນຄົ້ນຄວ້າປ່າໄມ້ ກໍໄດ້ຖາມຂໍ້ມູນໄປຍັງບ້ານອື່ນທີ່ຂຶ້ນກັບເມືອງຄຳເກີດ ກໍໄດ້ຂໍ້ມູນເພີ່ມເຕີມວ່າ ປ່າໝໍ່ຂົມທີ່ບ້ານໂພນທອງ ແລະ ບ້ານສົບພວນ ທີ່ຂຶ້ນກັບເມືອງຄຳເກີດ ກໍມີປາກົດການເປັນຂີເໝືອນກັນ. ຈາກນັ້ນ ກໍໄດ້ຕິດຕໍ່ຂໍ້ມູນນຳບັນດາບ້ານ ທີ່ຂຶ້ນກັບເມືອງນາໝໍ້, ແຂວງອຸດົມໄຊ ແລະ ຂໍ້ມູນຈາກແຂວງຫົວພັນ ຊາບວ່າ ບໍ່ທັນເຫັນປາກົດການອອກຂີ. ໝໍ່ຂົມ ມີ 2 ປະເພດ ຄື ປະເພດກາບຂົນ ແລະ ກາບກ້ຽງ. ປະເພດກາບກ້ຽງຈະແຜ່ກວ້າງຢູ່ທີ່ ແຂວງບໍລິຄຳໄຊ (ກໍລະນີທີ່ກຳລັງເປັນຂີ), ຫຼວງພະບາງ, ຫຼວງນ້ຳທາ ແລະ ຜົ້ງສາລີ. ສ່ວນປະເພດກາບເປັນຂົນ ແລະ ມີຂະໜາດໃຫຍ່ກວ່າປະເພດກາບກ້ຽງ ແມ່ນແຜ່ເປັນວົງກວ້າງ ຢູ່ແຂວງຊຽງຂວາງ ແລະ ແຂວງຫົວພັນ.

ທາງດ້ານເສດຖະກິດ: ໝໍ່ໄມ້ຂົມ ເປັນໝໍ່ໄມ້ທີ່ອອກຍາມແລ້ງ ຊຶ່ງແມ່ນລະດູທີ່ໝໍ່ໄມ້ອື່ນທົ່ວໄປກຳລັງພັກຜ່ອນ ບໍ່ໃຫ້ໜໍ່ ນອກຈາກໄມ້ກະແສນ ແລະ ໄມ້ເພັກ ທີ່ມີຢູ່ພາກກາງ ລົງຫາພາກໃຕ້ຂອງປະເທດ ແຕ່ກໍຢູ່ໃນຈຳນວນໜ້ອຍ. ຄືດັ່ງເຮົາສາມາດເຫັນໄດ້ໃນຕະລາດ ນັບແຕ່ ວຽງຈັນເຖິງເຂດພາກເໜືອ ໝໍ່ໄມ້ຂົມ ຈະເຫັນແຕ່ ເດືອນທັນວາເຖິງເດືອນເມສາ. ທີ່ຕະລາດວຽງຈັນ ໝໍ່ໄມ້ຂົມເປືອກຂົນ ມີລາຄາ 6,000 ກີບ/ກິໂລ, ໝໍ່ຂົມເປືອກກ້ຽງ ມີລາຄາ 7,000 ກີບ/ກິໂລ. ກໍລະນີຕິດຕາມກຸ່ມຈັດສັນ ແລະ ນຳໃຊ້ປ່າໝໍ່ຂົມ ທີ່ບ້ານນ້ຳແພງ, ເມືອງນາໝໍ້ ແຂວງອຸດົມໄຊ, ໃນສົກປີ2011ນີ້ບ້ານໄດ້ອະນຸມັດຂຸດຄົ້ນໝໍ່ໄມ້ຂົມເພື່ອເປັນສິນຄ້າ ໂດຍສະເພາະ (ບໍ່ລວມບໍລິມາດບໍລິໂພກ) 50 ໂຕນ, ລາຄາຈາກບ້ານ ກຳນົດໄວ້ 4,000 ກີບ/ກິໂລ. ມູນຄ່າເງິນ ເຂົ້າຫາປະຊາຊົນໃນບ້ານ (45 ຄອບຄົວ) 200,000,000 ກີບ (ສອງຮ້ອຍລ້ານກີບ) ຊຶ່ງໃນນັ້ນ ແຕ່ລະກິໂລ ຈາກຜູ້ຂາຍ ຈະປະກອບສ່ວນ 200 ກີບໃຫ້ແກ່ກອງທຶນບ້ານ ສະນັ້ນ ບ້ານຈະໄດ້ເງິນ 10 ລ້ານກີບ. ນອກຈາກເງິນສະສົມກອງທຶນທີ່ກ່າວນີ້, ຜູ້ປະກອບການ ກໍຄືຜູ້ມາຊື້ໝໍ່ໄມ້ຂົມຈາກບ້ານນ້ຳແພງ ຍັງໄດ້ປະກອບສ່ວນເພີ່ມໃຫ້ບ້ານ ແຕ່ລະປີ ປະມານ 5-6 ລ້ານກີບ. ທີ່ເມືອງນາໝໍ້ ຍັງມີອີກຫຼາຍບ້ານທີ່ມີປ່າໝໍ່ໄມ້ຂົມ ຊຶ່ງຊາວບ້ານໄດ້ມີລາຍຮັບຢ່າງສະໝ່ຳສະເໝີ ໃນແຕ່ລະປີ.

ຂໍ້ມູນການເປັນຂີຂອງໄມ້ໜໍ່ຂົມ ກໍຄືໄມ້ປ່ອງອື່ນໆນີ້ ແມ່ນມີຈຸດປະສົງ ແນະນຳໃຫ້ອຳນາດການປົກຄອງທ້ອງຖິ່ນ ກໍຄືປະຊາຊົນທີ່ນຳໃຊ້ປ່ານັ້ນ ໃຫ້ມີຄວາມເອົາໃຈໃສ່ປ້ອງກັນໄຟໄໝ້ປ່າ ຍ້ອນບັນດາຕົ້ນໄມ້ປ່ອງນັ້ນຈະແຫ້ງ ແລະ ຕາຍພ້ອມກັນນັ້ນ ກໍລະວັງ ແລະ ກຳຈັດການລະບາດຂອງໜູຂີ. ໝາກຂີຂອງໄມ້ປ່ອງທຸກຊະນິດ ຈະມີສັບພະຄຸນສູງທາງດ້ານໂພສະນາການ ແລະ ບຳລຸງຮອກໂມນທາງເພດ ຂອງສັດທີ່ກິນໝາກຂີນັ້ນ ກະຕຸກໃຫ້ມີການແຜ່ພັນຢ່າງໄວ ເຊັ່ນ: ຈຳພວກໝູ, ໄກ່ປ່າ, ນົກ ແລະ ກະຮອກ ເປັນຕົ້ນ. ທາງດ້ານການຄົ້ນຄວ້າ ແລະ ອານຸລັກຊີວະນາໆພັນ ແມ່ນເຫັນວ່າ ເປັນໂອກາດດີທີ່ນັກຄົ້ນຄວ້າ ຈະມີແຜນອອກໄປເກັບແກ່ນຂີ ຂອງໜໍ່ໄມ້ຂົມໄວ້ ເພື່ອເອົາໄປຜັນຂະຫຍາຍ ແລະ ປູກສິ່ງເສີມໃຫ້ແກ່ຊາວບ້ານອື່ນທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂທາງດ້ານພູມີປະເທດ ກໍຄືສະພາບອາກາດຂອງທ້ອງຖິ່ນຕົນ. ທາງດ້ານວິທະຍາສາດ, ການເກັບຮັກສາແກ່ນຂີໄມ້ປ່ອງໄວ້ ແມ່ນຮັກສາຊີວະນາໆພັນ ແລະ ເປັນປັດໃຈນຶ່ງ ເພື່ອການແລກປ່ຽນຂໍ້ມູນກັບສະຖາບັນການຄົ້ນຄວ້າພືດ ໃນລະດັບສາກົນ.

ການປູກໝາກກ້ວຍຫອມ

ໂດຍ: ທົງທອງ ເພັດວິໄຊ, ພະແນກບໍລິຫານ ສຄກປ

ກ້ວຍຫອມ ແມ່ນໝາກໄມ້ຊະນິດນຶ່ງ ທີ່ມີຫຼາຍຢູ່ໃນບ້ານເຮົາ ແລະ ນິຍົມບໍລິ�โພກກັນຫຼາຍ, ເນື່ອງຈາກວ່າກ້ວຍຫອມເປັນໝາກໄມ້ທີ່ບໍລິໂພກງ່າຍ ແລະ ມີວິຕາມິນສູງຕໍ່ຮ່າງກາຍ ຊ່ວຍລະບາຍງ່າຍ, ບໍ່ວ່າເດັກນ້ອຍ ຫຼື ຄົນສູງອາຍຸກໍ່ສາມາດບໍລິໂພກໄດ້ ເພື່ອເປັນຂອງຫວານ ຫຼັງຮັບປະທານອາຫານ, ທີ່ສຳຄັນຍັງເຮັດຢ່າງອື່ນໄດ້ອີກ ເຊັ່ນ: ກ້ວຍຈີດ, ກ້ວຍອົບແຫ້ງ, ນ້ຳຫວານກ້ວຍ ແລະ ອື່ນໆອີກຫຼາຍຢ່າງ.

ແນວພັນທີ່ນິຍົມກັນປູກຫຼາຍແມ່ນກ້ວຍຫອມ (AAAG roup) ໃຫ້ຜົນຜະລິດສູງ ລົດຊາດຫວານ ຫອມດີ ແລະ ໝາກໃຫຍ່.

ການປູກ

1. ການກະກຽມດິນປູກ

ໄຖໃຫ້ເລິກພໍປະມານ 1 ຄັ້ງ ຕາກດິນ ແລ້ວໄຖພວນ 1-2 ຄັ້ງ ໃຫ້ດິນຜຸຜຸ່ຍດີ ແລະ ຈະຊ່ວຍກຳຈັດວັດສະພືດຫຼາຍກວ່າ 20% ຕ້ອງໄຖພວນຄືນໃໝ່.

2. ການກຽມຂຸມປູກ

ໄລຍະປູກ ລະຫ່ວາງແຖວ ແລະ ຕົ້ນ ປະມານ 2x2 ແມັດ. ຂະໜາດຂຸມປູກ ກ້ວາງ, ຍາວ ແລະ ເລິກ ປະມານ 30x30x30 ຊັງຕີແມັດ ແລະ ຮອງພື້ນຂຸມດ້ວຍດິນປະສົມປຸຍອິນຊີ ປະມານ 5 ກລ/ຂຸມ.

3. ການກະກຽມພັນ ແລະ ການປູກ

ໃຊ້ຫໍ່ພັນທີ່ສົມບູນ ປັດສະຈາກສັດຕູພືດ ຄວາມຍາວຂອງຫໍ່ 25-35 ຊຕມ, ມີໃບປະມານ 2-3 ໃບ, ວາງຫໍ່ພັນທີ່ກົ້ນພື້ນຂຸມ, ຈັດວາງໃຫ້ຕົ້ນທີ່ຕິດຕົ້ນແມ່ຢູ່ໃນທິດທາງດຽວກັນ ເພື່ອໃຫ້ມີການອອກດອກໄປໃນທິດທາງດຽວກັນ ແລະ ສະດວກໃນການດູແລຮັກສາ. ຖົມບໍລິເວນຂຸມໃຫ້ແໜ້ນ ແລະ ປົກຫຸ້ມດ້ວຍເຟືອງ ຫຼື ຫຍ້າແຫ້ງ ແລ້ວຫົດນ້ຳໃຫ້ຊຸ່ມ.

4. ການໃຫ້ນ້ຳ

ຕ້ອງໃຫ້ນ້ຳຢ່າງສະໝ່ຳສະເໝີຕະຫຼອດລະດູປູກ ເມື່ອໜ້າດິນແຫ້ງຕ້ອງໃຫ້ນ້ຳ (ໂດຍເກັບຕົວຢ່າງດິນຈາກຜິວດິນເລິກ 15 ຊຕມ ກຳເປັນກ້ອນ ຖ້າແບມືອອກແລ້ວແຕກຊະ ຄວນໃຫ້ນ້ຳເພີ້ມແກ່ຕົ້ນກ້ວຍ).

5. ການໃຫ້ປຸຍ

ໃສ່ປຸຍຄັ້ງທີ 1 ແລະ 2 ເມື່ອຕົ້ນກ້ວຍ ມີອາຍຸ 1 ແລະ 3 ເດືອນ ດ້ວຍສູດ 20-10-10 ຫຼື 15-15-15 ຫຼື ສູດໃກ້ຄຽງ 125-250 ກຼາມ/ຕົ້ນ/ຄັ້ງ.

ໃສ່ປຸຍຄັ້ງທີ 3 ແລະ 4 ເມື່ອອາຍຸ 5 ແລະ 7 ເດືອນ ດ້ວຍສູດ 13-13-21 ຫຼື ສູດໃກ້ຄຽງ ໃນອັດຕາ 125-250 ກຼາມ/ຕົ້ນ/ຄັ້ງ. ໃສ່ປຸຍອິນຊີ (ປຸຍຄອກ ຫຼື ປຸຍໝັກ) ປີລະ 1-2 ຄັ້ງ.

6. ການແຕກໜໍ່

ຫຼັງຈາກປູກກ້ວຍໄດ້ ປະມານ 5 ເດືອນ ໃຫ້ຕັດແຕ່ງໜໍ່ ເພື່ອໃຫ້ຕົ້ນແມ່ມີຄວາມສົມບູນ.

7. ການຄ້ຳຍັນຕົ້ນ

ຕ້ອງໃຊ້ໄມ້ຄ້ຳຍັນ ຫຼື ດາມກ້ວຍທຸກຕົ້ນ ທີ່ອອກປີແລ້ວ ເພື່ອປ້ອງກັນລຳຕົ້ນຫັກລົ້ມ ແລະ ຕະຫຼອດລະດູການຄ້ຳຍັນໃຫ້ຢູ່ໃນສະພາບທີ່ໝັ້ນຄົງແຂງແຮງ.

8. ການຫຸ້ມເຄືອ ແລະ ຕັດແຕ່ງຮູບຊົງຂອງໃບ

ການຫຸ້ມເຄືອຈະເຮັດຫຼັງຈາກຕັດປີ ບໍ່ເກີນ 15 ມື້, ເພື່ອໃຫ້ເປືອກກ້ວຍໃສງາມ ແລະ ປ້ອງກັນແມງໄມ້ທຳລາຍ ດ້ວຍຖົງຢາງສີຟ້າ ແບບເປີດທາງລຸ່ມໄດ້, ໂດຍຫຸ້ມທັງເຄືອ ແລະ ຫຸ້ມທຸກເຄືອ. ສ່ວນການຕັດແຕ່ງຊົງໃບ ຄວນຕັດເມື່ອໃບ ເລີ້ມຫັກ ກ່ອນທີ່ຈະສ້ຽງສີກັບເປືອກກ້ວຍ. ຫຼັງຈາກນັ້ນ ກໍ່ເລີ້ມເກັບກ່ຽວ ແລະ ນຳໄປບໍລິໂພກໄດ້.

ເພັຍຈັກຈັ່ນສີນ້ຳຕານ

ໂດຍ: ວຽງໄຊ ຍ່າຈູຕົວ, ສູນຂໍ້ມູນຂ່າວສານ

ລັກສະນະທົ່ວໄປ

ເພັຍຈັກຈັ່ນມີຫຼາຍຊະນິດ ແຕ່ພົບເຫັນຢູ່ບ້ານເຮົາເປັນສັດຕູຂອງເຂົ້າ ມີ 4 ຊະນິດ ຄື: ເພັຍຈັກຈັ່ນສີຂາວ, ເພັຍຈັກຈັ່ນສີນ້ຳຕານ, ເພັຍຈັກຈັ່ນສີລາຍແຊກ ແລະ ເພັຍຈັກຈັ່ນຫຼັງຂາວ ແຕ່ທີ່ສຳຄັນ ມີ 2 ຊະນິດ ຄື: ເພັຍຈັກຈັ່ນສີຂາວ ແລະ ເພັຍຈັກຈັ່ນສີນ້ຳຕານ ເພາະສອງຊະນິດນີ້ ເປັນຕົວສ້າງເຊື້ອພະຍາດໄວຣັສມາສູ່ຕົ້ນເຂົ້າ. ເພັຍຈັກຈັ່ນເປັນແມງໄມ້ຂະໜາດນ້ອຍ ແລະ ເຕັ້ນເກັ່ງ, ການຈະເລີນເຕີບໂຕອາໃສການລອກຄາບຈາກໂຕອ່ອນເປັນໂຕແກ່.

ເພ້ຍຈັກຈັ່ນສີນ້ຳຕານ

ໄລຍະການລະບາດ

ເພ້ຍຈັກຈັ່ນພວກນີ້ ທຳລາຍເຂົ້າແຕ່ໄລຍະເປັນກ້າຈົນຮອດເຂົ້າສຸກ. ຖ້າປີໃດມີຄວາມແຫ້ງແລ້ງ ອາກາດອົບເອົ້າຕິດຕໍ່ກັນຫຼາຍອາທິດ ຖ້າອາກາດແບບນີ້ ເໝາະສົມແກ່ການແຜ່ລະບາດຂອງເພ້ຍຈັກຈັ່ນ.

ລັກສະນະການທຳລາຍ

ເພ້ຍຈັກຈັ່ນທັງໂຕແກ່ ແລະ ໂຕອ່ອນ ດູດກິນນ້ຳລ້ຽງຈາກໃບ ແລະ ລຳຕົ້ນຂອງເຂົ້າ ໂດຍສະເພາະ ແມ່ນເພ້ຍຈັກຈັ່ນສີຂຽວ ແລະ ສີນ້ຳຕານ ຢູ່ໃນປະເທດລາວ ໃນໄລຍະຜ່ານມາ ເພ້ຍຈັກຈັ່ນທີ່ທຳລາຍໜັກ ແລະ ເຮັດໃຫ້ຜົນຜະລິດເສຍຫາຍຫຼາຍ ແມ່ນເພ້ຍຈັກຈັ່ນສີນ້ຳຕານ ດັ່ງນັ້ນ ໃນບົດນີ້ ຈະເວົ້າເຖິງເພ້ຍຈັກຈັ່ນສີນ້ຳຕານ.

ລັກສະນະຮູບร່າງ ແລະ ວົງຈອນຊີວິດຂອງເພ້ຍຈັກຈັ່ນສີນ້ຳຕານ

ໂຕແມ່ ຈະມີສີນ້ຳຕານອ່ອນ ແລະ ແກ່ປົນກັນ, ລວງຍາວຂອງລຳໂຕ ແທກໄດ້ 3-4 ມິນລິແມັດ. ໂຕຜູ້ ມີລຳໂຕນ້ອຍກວ່າໂຕແມ່, ໂຕແມ່ມີຊີວິດຢູ່ໄດ້ 10-20 ມື້ ໃນລະດູຝົນ 30-40 ມື້ ໃນລະດູແລ້ງ. ເພ້ຍຈັກຈັ່ນສີນ້ຳຕານແມ່ນຶ່ງສາມາດວາງໄຂ່ໄດ້ 300-3,500 ໜ່ວຍ, ໄຂ່ມີລັກສະນະຄ້າຍຄືກັບຫວີໝາກ້ວຍເປັນຈຸດໆຢູ່ໃນກາບໃບ ແລະ ເສັ້ນກາງຂອງໃບເຂົ້າ. ໄຂ່ຈະແຕກພາຍໃນ 5-7 ມື້. ໂຕແມ່ມີປີກ ຫຼື ບໍ່ມີກໍສາມາດທຳລາຍຕົ້ນເຂົ້າໄດ້ຄືກັນ ສ່ວນໃຫຍ່ແລ້ວໂຕແມ່ມີປີກຈະເຮັດໃຫ້ຕົ້ນເຂົ້າໄໝ້ ຫຼື ແຫ້ວຕາຍ. ໂຕອ່ອນຂອງເພ້ຍຈັກຈັ່ນສີນ້ຳຕານ ມີໄລຍະການຈະເລີນເຕີບໂຕ ປະມານ 13-45 ມື້. ເພ້ຍຈັກຈັ່ນສີນ້ຳຕານ ຈະຂະຫຍາຍໂຕຢ່າງວ່ອງໄວທີ່ສຸດຕາມແນວພັນເຂົ້າທີ່ມັນມັກ.

ການປ້ອງກັນ ແລະ ການກຳຈັດ

- ການໃຊ້ແນວພັນເຂົ້າທີ່ມີຄວາມທົນທານ ແລະ ຕ້ານທານຕໍ່ແມງໄມ້ມາປູກ.
- ໃຊ້ວິທີການປູກພືດໝູນວຽນ, ຫຼີກຫຍ້າຂ້າຫຸ່ນທີ່ມີຢູ່ໃນໄຮ່ນາ, ຕາມຄັນນາ ໃຫ້ກ້ຽງ ແລະ ແປນດີ.
- ໃຊ້ແມງໄມ້ທີ່ເປັນປະໂຫຍດເຂົ້າທຳລາຍ.
- ໃຊ້ການສຳຫຼວດເພື່ອເກັບກຳສະພາບພະຍາດບົ້ງ ແມງ ຫຼື ການເຄື່ອໄຫວຂອງເພ້ຍຈັກຈັ່ນສີນ້ຳຕານ ຢູ່ຕາມທົ່ງນາ.
- ການປ້ອງກັນ ແລະ ກຳຈັດດ້ວຍສານເຄມີ ເຊັ່ນ:

1. ຢາອາໂຊດຣິນ 65% ຊະນິດນ້ຳ ສີດໃນອັດຕາ 3-4 ບ່ວງແກງ ປະສົມກັບນ້ຳ 15-20 ລິດ ຫຼື ຢາເຊວິນ 85% ຊະນິດຝຸ່ນ ສີດໃນອັດຕາ 3-4 ບ່ວງແກງ ປະສົມກັບນ້ຳ 20 ລິດ ຫຼື ໃຊ້ຢາໄມແຄັບ 50% ຊະນິດຝຸ່ນ ສີດໃນອັດຕາ 4 ບ່ວງແກງ ປະສົມກັບນ້ຳ 20 ລິດ.

2.ຖ້າການລະບາດຢູ່ໃນນາເຂົ້າ ທີ່ເຂົ້າກຳລັງເປັນນ້ຳນົມ ໃຫ້ສີດແຕ່ຢາເຊວິນ 85% ສ່ວນຢາໂຊດຣິນ ຫ້າມສີດ ເພາະຈະເປັນອັນຕະລາຍ. ຖ້າເພ້ຍຈັກຈັ່ນລະບາດໃນໄລຍະເຂົ້າສຸກ ຫ້າມໃຊ້ຢາເຄມີທຸກຊະນິດສີດເດັດຂາດ ຄວນເກັບກ່ຽວໂລດ.

ໄຂ່ຂອງເພ້ຍຈັກຈັ່ນສີນ້ຳຕານ